ທຶນສົມທົບ ສຳລັບ ພັດທະນາທຸລະກິດກະສິກຳ ຂອງໂຄງການ ຊຸກຂ

IFAD
Investing in rural people

ກອງທຶນສົມທົບ ສຳລັບ ພັດທະນາທຸລະກິດກະສິກຳມີຈຸດປະສົງສະເພາະດັ່ງນີ້:

ເພື່ອເຮັດໃຫ້ກິດຈະກຳທີ່ໂຄງການສະໜັບສະໜູນໄດ້ເຂົ້າເຖິງຕະຫຼາດ ແລະ
ເຮັດໃຫ້ຫົວໜ່ວຍທຸລະກິດໄດ້ຮັບການບໍລິການເພື່ອພັດທະນາທຸລະກິດຂອງຕົນຜ່ານການສະໜັບສະໜູນ
ດ້ານເຕັກນິກ ແລະ
ການຊ່ວຍເຫຼືອດ້ານການເງິນເຂົ້າໃສ່ການລົງທຶນໃນຂະແໜງກະສິກຳທີ່ຕິດພັນກັບກຸ່ມເປົ້າໝາຍ ແລະ
ຊຸມຊົນເປົ້າໝາຍຂອງໂຄງການ;

ເພື່ອເຮັດໃຫ້ຄົວເຮືອນກະສິກອນໂດຍສະເພາະຄົວເຮືອນທຸກຍາກ ແລະ
ຄົວເຮືອນທີ່ມີການຜະລິດກະສິກຳຂະໜາດນ້ອຍ ມີລາຍຮັບທີ່ໝັ້ນຄົງ ແລະ
ເພີ່ມຂຶ້ນຈາກການເພີ່ມທະວີສາຍພົວພັນທາງການຄ້າ ລະຫວ່າງ ກະສິກອນ ແລະ
ຫົວໜ່ວຍທຸລະກິດທີ່ສາມາດຮັບປະກັນການເຂົ້າເຖິງຕະຫຼາດ ແລະ
ການມີຕະຫຼາດຮອງຮັບທີ່ດີກວ່າເກົ່າ .

ປະເພດຂອງທຶນສົມທົບ: ໂຄງການ ຊຸກຂ ສະໜອງທຶນສົມທົບ 2 ປະເພດ:

ທຶນສຳລັບການຍົກລະດັບ-ສ້າງຂີດຄວາມສາມາດ:
ທຶນດັ່ງກ່າວແມ່ນການສະໜອງໃຫ້ ສຳລັບ ສ້າງຂີດຄວາມສາມາດໃຫ້ແກ່ຫົວໜ່ວຍທຸລະກິດ
ເຊິ່ງມີມູນຄ່າສູງສຸດແມ່ນ 560 ໂດລາສະຫະລັດ ຕໍ່ຫົວໜ່ວຍທຸລະກິດທີ່ສະໝັກຂໍທຶນ.
ການໃຫ້ທຶນເບື້ອງຕົ້ນນີ້ແມ່ນເພື່ອນຳໃຊ້ ສຳລັບ ການກະກຽມການລົງທຶນ ແລະ
ການສ້າງແຜນສະໝັກຂໍທຶນສົມທົບ ສຳລັບ ພັດທະນາທຸລະກິດກະສິກຳ. ການສະໝັກຂໍທຶນສົມທົບ
ສຳລັບ ພັດທະນາທຸລະກິດກະສິກຳຈຳເປັນສາມາດຂໍທຶນ ສຳລັບ ການໃຫ້ຄຳແນະນຳ ແລະ
ການຊ່ວຍເຫຼືອດ້ານວິຊາການໃນຊ່ວງຈັດຕັ້ງປະຕິບັດໂຄງການລົງທຶນໄດ້.

ທຶນສົມທົບ ສຳລັບ ພັດທະນາທຸລະກິດກະສິກຳມີ 3 ລະດັບ:

ມູນຄ່າການ ລົງທຶນ (USD)	ການໃຫ້ທຶນຂອງໂຄງການ PICSA (USD)			ລວມມູນຄ່າ ການສົມທົບທຶນ		ຄິດໄລ່ເປັນ ສ່ວນຮ້ອຍ	
	ທຶນປະເພດ 1	ທຶນປະເພດ 2	ທຶນປະເພດ 3				
	1-2,500	2,501-15,000	15,001-50,000				
	100%	50%	25%	ໂຄງການ	ບໍລິສັດ	ໂຄງການ	ບໍລິສັດ
2,500	2,500	-	-	2,500	-	100%	0%
15,000	2,500	6,250	-	8,750	6,250	58%	42%
50,000	2,500	6,250	8,750	17,500	32,500	35%	65%

ທຶນສົມທົບ ສຳລັບ ພັດທະນາທຸລະກິດກະສິກຳ: ແມ່ນສະໜອງໃຫ້ ສຳລັບ ປັບປຸງການດຳເນີນງານ, ການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳເຂົ້າໃນການປຸງແຕ່ງຜົນຜະລິດເພື່ອເພີ່ມມູນຄ່າ.
ສຳລັບມູນຄ່າການສົມທົບທຶນແມ່ນຂຶ້ນກັບຂະໜາດຂອງແຜນການລົງທຶນທາງການເງິນ ແລະ ສັດສ່ວນການປະກອບທຶນຂອງຫົວໜ່ວຍທຸລະກິດ. ໄດ້ມີຄວາມຄາດຫວັງว่า
ຫົວໜ່ວຍທຸລະກິດຈະມີການສົມທົບທຶນໃນສັດສ່ວນທີ່ຫຼາຍເທົ່າທີ່ຈະເປັນໄປໄດ້ ໂດຍສະເພາະການປະກອບທຶນເປັນເງິນສົດທີ່ຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຂໍທຶນດັ່ງກ່າວ.

ກຸ່ມເປົ້າໝາຍ ແລະ ຜູ້ທີ່ມີເງື່ອນໄຂສະໝັກທຶນ.

ການສະໝັກຂໍທຶນ ສຳລັບ ພັດທະນາທຸລະກິດກະສິກຳແມ່ນເປີດຮັບສະໝັກ ສຳລັບ
ຫົວໜ່ວຍທຸລະກິດເອກະຊົນທຸກປະເພດບໍ່ວ່າຈະເປັນບໍລິສັດຈຳກັດຜູ້ດຽວ, ບໍລິສັດຮ່ວມລົງທຶນ ຫຼື
ສະຫະກອນ, ທີ່ໄດ້ຮັບການຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍກັບ ພະແນກ ຫຼື
ຫ້ອງການອຸດສາຫະກຳ ແລະ ການຄ້າ,
ມີການດຳເນີນທຸລະກິດທີ່ພົວພັນເຖິງກິດຈະກຳທີ່ໄດ້ຮັບການສົ່ງເສີມຢູ່ຫ້ອງຖິ່ນພາຍໃຕ້ເວທີແລກປ່ຽນການ
ນຮ່ວມມືຂອງຫຼາຍພາກສ່ວນ ຫຼື
ພົວພັນເຖິງກິດຈະກຳຕ່າງໆທີ່ໄດ້ທຶນຈາກກອງທຶນສົ່ງເສີມການລົງທຶນຂອງກຸ່ມກະສິກອນ. ນອກຈາກນັ້ນ,
ກອງທຶນສົມທົບ ສຳລັບ
ພັດທະນາທຸລະກິດກະສິກຳຍັງພິຈາລະນາເຖິງຫົວໜ່ວຍທຸລະກິດທີ່ບໍ່ໄດ້ຈົດທະບຽນວິສາຫະກິດຢ່າງເປັນ
ທາງການເຊັ່ນກັນ. ຫົວໜ່ວຍທຸລະກິດທີ່ຈົດທະບຽນ ແລະ ບໍ່ໄດ້ຈົດທະບຽນຢ່າງເປັນທາງການ ລວມມີ:
ຜູ້ຊື້-ຂາຍສິ່ງ, ຜູ້ປຸງແຕ່ງ, ຜູ້ສະໜອງປັດໃຈການຜະລິດ, ສະຫະກອນການຜະລິດທີ່ໄດ້ຈົດທະບຽນ,
ຮ້ານສ້ອມແປງ ແລະ ບຳລຸງຮັກສາເຄື່ອງຈັກ-ກົນຈັກກະສິກຳ,
ຊາວກະສິກອນທີ່ມີລິດໄຖໃຫ້ບໍລິການໄຖດິນ ຫຼື ໃຫ້ບໍລິການດ້ານອື່ນໆໃຫ້ແກ່ຊາວກະສິກອນ,
ຊາວກະສິກອນທີ່ຜະລິດປັດໃຈການຜະລິດເພື່ອສະໜອງໃຫ້ແກ່ຊາວກະສິກອນກຸ່ມອື່ນໃນລະບົບການຜະ
ລິດກະສິກຳເຊັ່ນ: ຜະລິດແນວພັນ, ກ້າເບ້ຍ ແລະ ຜະລິດລູກປາ. ສຳລັບ ພໍ່ຄ້າ, ຜູ້ສະໜອງການບໍລິການ
ແລະ ປັດໃຈການຜະລິດທີ່ກ່າວມານີ້ຕ້ອງເປັນຜູ້ທີ່ມີທັກສະ ຫຼື
ມີແນວຄວາມຄິດທີ່ຈະປະກອບສ່ວນເຂົ້າໃນການຜະລິດກະສິກຳເປັນສິນຄ້າ ແລະ
ພັດທະນາຕ່ອງໂສ້ມູນຄ່າ.

ຂັ້ນຕອນການສະໝັກຂໍທຶນໂດຍຫຍໍ້

1 ການໃຫ້ຂໍ້ມູນ ແລະ ປະກາດຮັບສະໝັກ:

ທີມງານໂຄງການຂັ້ນແຂວງ ແລະ
ເມືອງຈະປະກາດເປັນແຕ່ລະໄລຍະ ກ່ຽວກັບ ຈຸດປະສົງ,
ລະບຽບການ, ຂັ້ນຕອນ ແລະ
ສິນຄ້າກະສິກຳທີ່ເປັນບຸລິມະສິດ/ມີທ່າແຮງ ສຳລັບ
ການສະໝັກຂໍທຶນໃຫ້ແກ່ມວນຊົນໄດ້ຮັບຮູ້.
ແບບຕໍ່ເນື່ອງ

ການປະເມີນເບື້ອງຕົ້ນຜູ້ສະໝັກຂໍທຶນ.

ທີມງານເມືອງລົງປະເມີນຄວາມສາມາດ ແລະ ຊັບພະຍາກອນ ແລະ
ທ່າແຮງໃນດ້ານຕ່າງໆຂອງຫົວໜ່ວຍທຸລະກິດ ແລະ ປະເມີນວ່າ
ເຂົາເຈົ້າມີທ່າແຮງພຽງພໍສຳລັບການເຂົ້າຮ່ວມໂຄງການ ແລະ
ຈັດຕັ້ງປະຕິບັດໂຄງການຂໍທຶນໄດ້ຫຼືບໍ່. ພາຍໃນ 10 ວັນ ນັບແຕ່
ຫົວໜ່ວຍທຸລະກິດແຈ້ງເຈດຈຳນົງສະໝັກຂໍທຶນເປັນຕົ້ນໄປ

2 ການກັ່ນກອງເບື້ອງຕົ້ນ ກ່ຽວກັບ ແນວຄວາມຄິດຂອງການລົງທຶນ ແລະ ການສະໝັກຂໍທຶນ ສຳລັບ ຂໍທຶນສ້າງຄວາມສາມາດ.

ທີມງານເມືອງຈະດຳເນີນການ ກັ່ນກອງເບື້ອງຕົ້ນ ກ່ຽວກັບ ເງື່ອນໄຂ ແລະ
ທ່າແຮງຂອງຜູ້ທີ່ມີຄວາມສົນໃຈສະໝັກຂໍທຶນ. ຜູ້ສະໝັກທີ່ຖືກຄັດເລືອກຈະສະໝັກຂໍທຶນ ສຳລັບ
ສ້າງຄວາມສາມາດເປັນອັນທຳອິດ (ທຶນມີມູນຄ່າສູງສຸດ 560ໂດລາສະຫະລັດ). ພາຍໃນ 30 ວັນ
ນັບແຕ່ໄດ້ຮັບແຈ້ງເຈດຈຳນົງການສະໝັກຂໍທຶນເປັນຕົ້ນໄປ.

3 ການສ້າງຄວາມສາມາດ, ການວາງແຜນການລົງທຶນ, ການກະກຽມແຜນການລົງທຶນເພື່ອສະໝັກຂໍທຶນ ສຳລັບ ພັດທະນາທຸລະກິດກະສິກຳ ແລະ ການຍື່ນສະໝັກ

ເປັນການຊ່ວຍເຫຼືອ ແລະ ສ້າງຄວາມສາມາດອັນຈຳເປັນຈາກທີມງານໂຄງການຂັ້ນແຂວງ ແລະ ຈາກພາຍນອກ,
ຜູ້ສະໝັກທີ່ຖືກຄັດເລືອກຈະວາງແຜນ ແລະ ກະກຽມການລົງທຶນ ແລະ ສ້າງແຜນການລົງທຶນເພື່ອສະໝັກຂໍທຶນ ແລະ
ຍື່ນບົດສະເໜີຂໍທຶນດັ່ງກ່າວໃຫ້ແກ່ທີມງານໂຄງການຂັ້ນເມືອງເຊິ່ງເປັນຜູ້ຕາງໜ້າໃຫ້ແກ່ຄະນະກຳມະການພັດທະນາເສດຖະກິດ ແລະ
ສັງຄົມເມືອງ ກ່ອນກຳນົດວັນປິດຮັບສະໝັກທີ່ທາງໂຄງການກຳນົດໄວ້. ພາຍໃນ 180 ວັນ ນັບແຕ່ການກັ່ນກອງເບື້ອງຕົ້ນເປັນຕົ້ນໄປ.

4 ການປະເມີນ ແລະ ອະນຸມັດບົດສະເໜີຂໍທຶນ

ທີມງານໂຄງການຂັ້ນແຂວງຈະກວດກາຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງບົດສະເໜີຂໍທຶນ. ການປະເມີນບົດສະເໜີຂໍທຶນລວມມີ:
ແຜນທຸລະກິດ, ການວິເຄາະດ້ານການເງິນ ແລະ ຜົນປະໂຫຍດທີ່ມີຕໍ່ຄົວເຮືອນຊາວກະສິກອນໃນເຂດເປົ້າໝາຍຂອງໂຄງການຊຸກນລະກະເສດ ແລະ
ສິ່ງເສີມການຜະລິດກະສິກຳເປັນສິນຄ້າຂະໜາດນ້ອຍແລະ ການໃຫ້ຄະແນນ ແລະ ສະເໜີຄຳເຫັນໃຫ້ແກ່ຄະນະກຳມະການພັດທະນາເສດຖະກິດ-
ສັງຄົມເມືອງ.
ຫຼັງຈາກນັ້ນ, ຄະນະກຳມະການພັດທະນາເສດຖະກິດ-ສັງຄົມເມືອງຈະປະເມີນເອກະສານຂໍທຶນດັ່ງກ່າວ ແລະ ຈະລົງຄຳເຫັນວ່າ
ບົດສະເໜີຂໍທຶນດັ່ງກ່າວຈະໄດ້ຮັບອະນຸມັດໂດຍບໍ່ຕ້ອງປັບປຸງເພີ່ມຕື່ມ, ຫຼື ອະນຸມັດແຕ່ຕ້ອງໄດ້ປັບປຸງ ຫຼື ຈະລົງຄຳເຫັນວ່າບໍ່ຜ່ານການຄັດເລືອກ.
ສຳລັບບົດສະໜັກຂໍທຶນທີ່ໄດ້ຮັບການອະນຸມັດໂດຍບໍ່ຕ້ອງປັບປຸງນັ້ນ, ທີມງານຈະເຊັນຮັບຮອງບົດສະເໜີດັ່ງກ່າວ ແລະ
ຈະເຂົ້າສູ່ຂັ້ນຕອນການເຈລະຈາສັນຍາ ແລະ ເຊັນສັນຍາມອບທຶນໄດ້. ແຕ່ລະໄຕມາດ ຫຼື ຂຶ້ນກັບສະພາບຕົວຈິງ.

5 ການພິຈາລະນາ ແລະ ອະນຸມັດຂັ້ນສຸດທ້າຍ ຈາກ ອີຟັດ ສຳລັບ ບົດສະເໜີຂໍທຶນປະເພດທີ 3

ບົດລາຍງານຜົນການປະເມີນ ແລະ ເອກະສານທີ່ກ່ຽວຂ້ອງທັງໝົດ ແລະ
ບົດສະເໜີຂໍທຶນຈະຖືກສົ່ງໃຫ້ແກ່ຫ້ອງການປະສານງານໂຄງການສູນກາງເພື່ອປະເມີນ ແລະ
ສົ່ງຕໍ່ໃຫ້ແກ່ຫ້ອງການອີຟັດປະຈຳພາກພື້ນເພື່ອພິຈາລະນາ ແລະ
ອອກເອກະສານອະນຸມັດເປັນຂັ້ນສຸດທ້າຍ. ຫ້ອງການປະສານງານໂຄງການສູນກາງ ແລະ
ຫ້ອງການອີຟັດຈະຕອບກັບພາຍໃນ 30 ວັນ.

6 ການເຈລະຈາສັນຍາ ແລະ ເຊັນສັນຍາ

ທີມງານໂຄງການຂັ້ນແຂວງ, ພະນັກງານບັນຊີຂັ້ນແຂວງ ແລະ ຜູ້ສະໝັກຂໍທຶນຈະຮ່ວມກັນຮ່າງສັນຍາຮ່ວມທຶນ
(ສັນຍາມອບທຶນ) ໂດຍການຕື່ມຂໍ້ມູນເຂົ້າໃສ່ຮ່າງສັນຍາ.
ຫຼັງຈາກນັ້ນ ສັນຍາດັ່ງກ່າວຈະເຊັນໂດຍປະທານຄະນະກຳມະການພັດທະນາເສດຖະກິດ ແລະ ສັງຄົມເມືອງ
ແລະ ຜູ້ສະໝັກຂໍທຶນ. ພາຍໃນ 30 ວັນ ພາຍຫຼັງໄດ້ຮັບອະນຸມັດບົດສະເໜີຂໍທຶນປັນຕົ້ນໄປ.